

## ປະຫວັດຄວາມເປັນມາຂອງຊົນເຜົ່າອີວມຽນ

ປະຫວັດຄວາມເປັນມາຂອງຊົນເຜົ່າອີວມຽນຢູ່ ເມືອງນາຫມໍ້ ແຂວງອຸດົມໄຊ ແມ່ນໄດ້ອົບພະຍົບມາຈາກ ເມືອງ ຢູນນານ. ສປປ ຈີນ ລົງມາຢູ່ແຂວງຜົ້ງສາລີ ແລະ ເຄື່ອນຍ້າຍເຂົ້າມາເມືອງນາຫມໍ້ ແຂວງອຸດົມໄຊ

**ຊື່ເອີ້ນ:** ຊົນເຜົ່າຄືອມຽນ ມີຊື່ເອີ້ນແຕ່ລະໄລຍະ ແລະ ແຕ່ລະສະໄຫມແຕກຕ່າງກັນຄື: ສະໄໝເຮັດການປະຕິວັດ ຊາດປະຊາທິປະໄຕ ພັກ-ລັດ ພາເອີ້ນ ວ່າ ຊົນເຜົ່າລາວຫ້ວຍ, ເຜົ່າມົ້ງ ແລະ ເຜົ່າອື່ນໆ ເອີ້ນເຂົາວ່າເຜົ່າ ແລນແຕນ, ຈຳນວນຫນຶ່ງພັດເອີ້ນວ່າຢ້າວຂາມ ແລະ ອື່ນໆ. ຊື່ຈັດໃຫມ່ປັດຈຸບັນແມ່ນເຜົ່າ ອີວມຽນ ແມ່ນຊື່ທີ່ເຂົາເຈົ້າມັກທີ່ສຸດ ເຜົ່າອີວມຽນຈະມີສອງແຊງຄື: ເຜົ່າອີວມຽນຂາວ ແລະ ເຜົ່າອີວມຽນແດງ. ເຜົ່າອີວມຽນສອງບ້ານຢູ່ເມືອງນາໝໍ້ ຂອງ ແຂວງອຸດົມໄຊ ແມ່ນເຜົ່າອີວມຽນຂາວ (ສ່ວນເຜົ່າອີວມຽນແດງ ແມ່ນຢູ່ເມືອງປາກທາ ແຂວງບໍ່ແກ້ວ ຄືບ້ານຫ້ວຍແມງ ເສັ້ນທາງຂຶ້ນໄປສູ່ພູຜາຜົນ)

**ພາສາ:** ພາສາປາກເວົ້າຂອງຊົນເຜົ່າອີວມຽນຢູ່ ແຂວງອຸດົມໄຊ ໄດ້ຈັດຢູ່ໃນຫມວດພາສາມົ້ງ - ອີວມຽນ, ຊົນເຜົ່າ ອີວມຽນ ຢູ່ແຂວງອຸດົມໄຊ ມີໜັງສື ຂຽນເປັນຂອງຕົນເອງ ເປັນຕົວອັກສອນ ຄ້າຍໆ ກັບຕົວອັກສອນຂອງຈີນ, ມີແຕ່ຄົນເຖົ້າຄົນແກ່ທີ່ສາມາດອ່ານໄດ້ຂຽນເປັນຕົວຫນັງສືນີ້, ສ່ວນຄົນລຸ້ນຫນຸ່ມ ປັດຈຸບັນແມ່ນອ່ານບໍ່ອອກຂຽນບໍ່ເປັນ

**ຄວາມເຊື່ອຖື, ຮີດຄອງປະເພນີ ແລະ ວັດທະນະທຳ-ສັງຄົມຂອງເຜົ່າອີວມຽນ:** ຊົນເຜົ່າ ອີວມຽນ ແມ່ນເຊື່ອຖືທຸກສິ່ງທຸກຢ່າງ ທີ່ຢູ່ຮອບຕົວລ້ອນແຕ່ມີຜີອາໄສຢູ່ທັງນັ້ນເຜົ່າ ອີວມຽນ ມີຄວາມເຊື່ອຖືແບບປະສົມປະ ສານກັນເຊັ່ນ: ເຊື່ອຖືຜີ ແລະ ເຊື່ອຖືສາສະໜາບັນພະບູຣຸດຂອງຕົນເອງ, ເຜົ່າອີວມຽນ ສືບທອດຕະກຸນທາງພໍ່ ເປັນຫຼັກ, ລູກຕ້ອງສືບທອດຕະກຸນຂອງພໍ່ຢູ່ສະເໝີ. ລູກສາວທີ່ໄດ້ແຕ່ງງານສ້າງຄອບຄົວແລ້ວໄດ້ໄປຢູ່ນຳ ຜົວກໍຕາມບໍ່ໄດ້ປ່ຽນແປງຊື່ຕະກຸນຂອງຜົວຍັງຮັກສາຕະກຸນຂອງພໍ່ຕົນ, ຊົນເຜົ່າອີວມຽນ ແມ່ນໄດ້ເປັນລະບົບຄອບຄົວ ໃຫຍ່ທີ່ມີການຂະຫຍາຍຕົວໃນຄອບ ຄົວ ພໍ່ເປັນຜູ້ທີ່ມີບົດບາດສຳຄັນກ່ວາຫມູ່ ແລະ ໃນສັງຄົມຂອງຊົນເຜົ່າອີວມຽນ ພວກເຮົາຈະເຫັນໄດ້ຜູ້ຊາຍຂອງຊົນເຜົ່າອີວມຽນ ເປັນບຸກຄົນທີ່ມີອຳນາດ ໃນການຕັດສິນບັນຫາຕ່າງໆ ແລະ ທັງເປັນ ຜູ້ທີ່ມີສິດສືບທອດມູນມໍລະດົກຂອງຕະກູນຕື່ມອີກ.

**ລັກສະນະການປຸກສ້າງເຮືອນ:** ຂອງຊົນເຜົ່າອີວມຽນ ແມ່ນມີລັກສະນະເຮືອນຊັ້ນດຽວຊູດິນ (ແບບເຮືອນຂອງ ຊົນເຜົ່າມົ້ງ) ເຮືອນຫຼັງຫນຶ່ງຈະມີການ ຈັດແບ່ງເປັນ 3 ປະຕູຈະແຈ້ງຄື: ປະຕູຜູ້ຊາຍເປີດເຂົ້າບ່ອນຫ້ອງຮັບແຂກ, ປະຕູແມ່ຍິງເປີດເຂົ້າສູ່ເຮືອນຄົວ ບ່ອນແຕ່ງຢູ່ຄົວກິນຂອງຄອບ ຄົວ ແລະ ປະຕູ ທີສາມແມ່ນປະຕູໃຫຍ່ສຳລັບເຮັດພິທີກຳຕ່າງໆ ເຊິ່ງຫນ້າກັບຮ້ານບູຊາຂອງຄອບຄົວ, ຕາມທັດສະນະຂອງຊົນເຜົ່າອີວມຽນແລ້ວເຂົາເຈົ້ານັບຖືເຮືອນ ເປັນສິ່ງສຳຄັນ ແລະ ສັກສິດທີ່ສຸດ, ຍ້ອນແນວນັ້ນເວລາຈະປຸກສ້າງເຮືອນຫຼັງ ຫນຶ່ງຕ້ອງຊອກຫາມື້ສັນວັນດີທີ່ສຸດ ເພື່ອບໍ່ໃຫ້ຜິດຜີ ແລະ ກໍ່ເພື່ອຄວາມສຸກສົມຫວັງ ຂອງສະມາຊິກພາຍໃນຄອບຄົວ.

**ຊົນເຜົ່າອີວມຽນຈະມີສອງລັກສະນະການເກີດລູກຄື:** ຖ້າລູກມີພໍ່ ແມ່ນໃຫ້ເກີດໃນເຮືອນຫ້ອງນອນ ຂອງຄູ່ຜົວເມຍ, ແຕ່ກໍລະນີລູກບໍ່ມີພໍ່ (ລູກ ທາງ) ແມ່ນ ໃຫ້ເກີດຢູ່ນອກເຮືອນບ່ອນທີ່ໄດ້ຫ້າງຫາກະກຽມໄວ້ກ່ອນ ໃນບໍລິເວນອ້ອມແອ້ມເຮືອນທາງນອກ, ມີຜູ້ເບິ່ງແຍງດູແລຊ່ວຍເຫຼືອຂອງພໍ່ແມ່ຜົວ ແລະ ຜູ້ທີ່ຊຳນິຊຳນານໃນການປະສູດເປັນຢ່າງດີ.

**ຊົນເຜົ່າອີວມຽນ:** ມີຮີດຄອງປະເພນີກ່ຽວກັບການສົ່ງສະການເວລາມີຄົນຕາຍໄດ້ມີການຈັດຕັ້ງຄົບງັນ ແລະ ມີການຈັດຕັ້ງພິທີກຕ່າງໆຕາມແຕ່ລະຂັ້ນຕອນລະອຽດຮອບຄອບດີ ຫຼັງຈາກນັ້ນຈິ່ງສົ່ງສະການດ້ວຍການຂຸດຂຸມຝັງ ສົບຢູ່ປ່າຊ້າຂອງບ້ານ (ສຳລັບຜູ້ທີ່ເຊື່ອຖືຜີ) ສ່ວນຄອບຄົວທີ່ເຊື່ອຖືສາສະຫນາບັນພະບູຣຸດບາງເທື່ອກໍ່ໄດ້ຈູດສົບຄົນຕາຍຄືກັບເຜົ່າລາວ ແລະ ເຜົ່າລື້.

**ຊົນເຜົ່າອີວມຽນ** ມີບຸນປະເພນີທີ່ສຳຄັນຫຼາຍຢ່າງຄ້າຍໆ ກັບຊົນເຜົ່າມົ້ງໂດຍສະເພາະແມ່ນບຸນກິນຈຽງ (ເຈຍ ຊຽງຮຽງ) ຈະໄດ້ຈັດຂຶ້ນໃນກາງເດືອນກຸມພາຂອງທຸກໆປີ. ນອກ ຈາກບຸນກິນຈຽງແລ້ວເຜົ່າອີວມຽນຍັງຈັດຕັ້ງພິທີກຳທີ່ສຳຄັນຕ່າງໆຄື: ພິທີເຮັດຜີບ້ານ ຜີບັນພະບູຣຸດ ແລະ ພິທີກຳອື່ນໆ.

**ດ້ານສິລະປະວັນນະຄະດີ:** ຊົນເຜົ່າອີວມຽນມີເຄື່ອງດົນຕີພື້ນເມືອງຂອງຕົນເອງຄື: ກອງ, ປີ່, ຄ້ອງ, ແຊ່ງ, ມີ ເພງຮ້ອງທຳນອງເສບ, ມີກອນຂັບລຳພື້ນເມືອງທີ່ເປັນເອກະລັກຂອງຊົນເຜົ່າເປັນຢ່າງດີ. ນອກຈາກນີ້ເຜົ່າອີວ ມຽນ ຍັງມີເຄື່ອງນຸ່ງຫົ່ມ ແລະ ເຄື່ອງແຕ່ງກາຍທີ່ເປັນເອກະລັກປະຈຳຊົນເຜົ່າທັງເພດຊາຍ ແລະ ເພດຍິງ ທີ່ປະກອບດ້ວຍສີສັນລວດລາຍ, ສີໄມ້ລາຍມືອັນປານີດ, ຊຳນິຊຳນານໃນການປັກແສ່ວໄດ້ສືບທອດກັນມາແຕ່ປູ່ຍ່າຕາຍາຍ

**ດ້ານເສດຖະກິດ:** ຊົນເຜົ່າອີວມຽນ ແມ່ນມີອາຊີບເຮັດໄຮ່ປູກເຂົ້າຈ້າວ, ມີສວນປູກພືດຜັກ ແລະ ສັດລ້ຽງເຊັ່ນ: ງົວ, ຄວາຍ, ມ້າ, ແບ້, ຫມູຫນາ ແລະ ສັດປີກເປັດ, ໄກ່, ເຜົ່າອີວມຽນ ມີມູນເຊື້ອດ້ານການຫັດຖະ ກຳ ແມ່ນການຫຍິບຖັກປັກແສ່ວເຄື່ອງນຸ່ງຫົ່ມ ທີ່ມີລວດລາຍປະດັບເອ້ຍ້ອງທີ່ສວຍສົດ ງົດງາມເພື່ອສົ່ງເສີມວັດທະນາທຳອັນດີງາມຂອງຊາດ ແລະ ຂອງຊົນເຜົ່າຮອດຊົ່ວລູກຊົ່ວຫຼານຕໍ່ໆ ໄປໃນອານາຄົດ.

**ຊົນເຜົ່າອີວມຽນ:** ຊົນເຜົ່າອີວມຽນແມ່ນຊົນເຜົ່າທີ່ມີຮີດຄອງປະເພນີທີ່ດີງາມວັດທະນະທຳທີ່ປັນເອກະລັກ ຂອງເຜົ່າເຊິ່ງ ພວກເຮົາຄົນລຸ້ນໃຫມ່ ຕ້ອງສົ່ງເສີມ,ອານຸລັກ ແລະ ຮັກສາໄວ້ໃຫ້ຄົນລຸ້ນຕໍ່ໆໄປໄດ້ສືບທອດ ແລະ ການນຸ່ງຖືທີ່ມີລັກສະນະອ່ອນຊ້ອຍ, ສວຍງາມແຕ່ຊົນເຜົ່ານີ້ພັດບໍ່ສົ່ງເສີມເລື່ອງ ເຄື່ອງມືຫັດຖະກຳ, ຈັກສານ ແລະ ການຜະລິດພໍປານໃດ.

## Iu Mian Ethnic Group

Originally, Iu Mian people moved from Yunnan province, China to Phongsaly and then moved to Namor district, Oudomxay province. There is only one Iu Mian village in the province.

Iu Mian is one of the official ethnic groups in the province, people used to call them Lao Houay, Hmong and Lan Tan in the past. They had no certain ethnic name before. Therefore, Iu Mian is chosen as the official name and has become the one that they like the most. There are two types of Iu Mian people "The White Iu Mian and the Red Iu Mian". But the Iu Mian people in Namor village is the white one. The majority of Red Iu Mian is in Luang Namtha province.

Iu Mian people have their own speaking language and writing form, the writing form is similar to Chinese alphabet, but only old generation can read it at the moment because it was disappeeared for years, so nothing left for the new generation.

The majority of Iu Mian people are animists, they believe in natural powers – almost everything on Earth. For example, they believe in "ghost" and their ancestors.

For human race, the father is the key person of the family and the son has to continue the race afterwards. The son is very important for the family as wll and he is the only one who canl replace his father's position. Men are the most powerful in solving problems in the family and else where.

The location of the house is chosen with great care by village elders, as it important that the site be acceptable to their ancestors. The family makes a tentative choice, and then consults the ancestors through an offering animal for sacrifice to determine whether the choice is acceptable. If no negative sings follow the offering, the family clears the site and levels it with mattocks and a tool made of a wide wooden board which is used to drag or push the soil. The ground should be as level as possible, as it forms the floor of the house. It is dampened and tamped down to make a hard surface. The house shape of Iu Mian and Hmong is the same. There is always an ancestral altar in the house as a family worship place.

Each baby is said to be sent to this world by a baby Goddess. The first three days of its life the baby still belongs to the spirit world and if the baby dies no funeral is held. The birth takes place in the couple's bedroom and no one but the midwife or husband can be present to assist in her delivery. In the past, a married woman was not allowed to give birth at her parent's house, but at her husband's house or her husband's parent's house.

To have a proper funeral is of great importance to the Iu mian people, for as a result the soul will prosper in the afterworld. There are many steps for organizing the funeral. Many sacrificial animals like pig, buffalo, cattle and chicken are killed for the dead. Most of the corpse will be burried in the forest near the village.